# ຄວາມເພງລຳໄລ (ເພງຮ່ຳໄຮ)

ໃຈຄວາມສຳຄັນ ຄວາມທຸກໃຈ
ຂໍ້ຄວາມສຳຄັນ ມ:໒໒
ຈຳນວນບົດ ໕ ບົດ
ເວລາຂຽນ ຫລັງຈາກກຸງເຢຣູຊາເລັມແຕກ ໕໘໖ ປີກ່ອນ ຄ.ສ.
ຜູ້ຂຽນ ທ່ານເຢເຣມີ

## ໑. ຄຳນຳ

ເຢເຣມີໄດ້ຂຽນເພງນີ້ ເມື່ອເວລາພວກຂອງພຣະອົງຖືກເນລະເທດໄປເມືອງບາບີໂລນ ຄືພາຍຫລັງກຸງເຢຣູຊາເລັມໄດ້ຖືກທຳລາຍແລ້ວ

## ໒. ວ່າດ້ວຍເນື້ອຄວາມ

ເມື່ອເຢເຣມີເຫັນກຸງເຢຣູຊາເລັມຖືກທຳລາຍແລ້ວກໍສະແດງຄວາມທຸກໃຈ ເພາະເຫັນວ່າການນີ້ເກີດຂຶ້ນແກ່ຄົນຂອງຕົນ ແລະມີຫລາຍເທື່ອທີ່ເຢເຣມີໄດ້ຕັກເຕືອນພວກເຂົາ ແຕ່ພວກເຂົາບໍ່ຍອມເຊື່ອຟັງ ສົມນັ້ນພຣະເຈົ້າຈຶ່ງລົງໂທດພວກເຂົາ ແລະຍິ່ງກວ່ານັ້ນເຢເຣມີຍັງໄດ້ສະແດງຄວາມທຸກໃຈເມື່ອເຫັນວ່າພວກເຂົາມີຄວາມທຸກຍາກ

ໜັງສືນີ້ໄດ້ສະແດງໃຫ້ເຫັນຜົນຂອງຄວາມບາບ ຜົນຂອງການຖ່ອມຕົວລົງແລະຜົນຂອງການປະໃຈເກົ່າເອົາໃຈໃໝ່ ພຣະເຈົ້າເປັນອົງ

ບໍລິສຸດ ແລະເພາະເຫັນແກ່ຄວາມບໍລິສຸດນັ້ນຈຶ່ງລົງໂທດພວກເຂົາ ແລະພຣະເຈົ້າຊົງຮັກແພງພວກເຂົາ ສນັ້ນເມື່ອພຣະອົງລົງໂທດພວກເຂົາພຣະອົງຈຶ່ງມີຄວາມທຸກໃຈ (໓:໓໓) ແລະຊົງສແດງຄວາມສັງເວດອອກມາດ້ວຍຄຳປະຕິຍານທີ່ເຕັມໄປດ້ວຍພຣະຄຸນ (໓:໒໒–໒໔)

## ໓. ການຈັດເປັນບົດ

ບົດທີ ໑ ເພງຮ່ຳໄຮເຖິງກຸງເຢຣູຊາເລັມທີ່ຮ້າງເປົ່າ

ບົດທີ ໒ ວ່າດ້ວຍສາເຫດທີ່ກຸງເຢຣູຊາເລັມຮ້າງ

ບົດທີ ໓ ເຢເຣມີ ຍອມເຂົ້າເປັນ ພັກພວກ ດຽວກັນກັບ ເພື່ອນຂອງຕົນ

ບົດທີ ໔ ເພງຮ່ຳໄຮເຖິງເພື່ອນທີ່ຖືກຍາກລຳບາກ

ບົດທີ ໕ ຄຳຂໍເຊີນໃຫ້ພຣະອົງຊົງໂຜດຊ່ອຍພວກອິສຣາເອັນ